# ຄວາມຊ່ວຍເຫຼືອດ້ານການດູແລເບິ່ງແຍງສຸຂະພາບສຳລັບພະນັກງານໃນສະຖານທີ່ດູແລເບິ່ງແຍງເດັກນ້ອຍ

## ທ່ານອາດມີຄຸນສົມບັດສຳລັບການປະຢັດເງິນເພີ່ມກ່ຽວກັບການຄອບຄຸມດ້ານສຸຂະພາບຂອງທ່ານ!

ໃນປີ 2021, ຝ່າຍນິຕິກຳຂອງລັດວໍຊິງຕັນໄດ້ສ້າງໂຄງການສຳລັບພະນັກງານໃນສະຖານທີ່ດູແລເບິ່ງແຍງເດັກນ້ອຍທີ່ມີໃບອະນຸຍາດ ເພື່ອຮັບການປະກັນສຸຂະພາບສຳລັບເບ້ຍປະກັນ $0 ຕໍ່ເດືອນ. ຜູ້ຮ່ວມມືຂອງພວກເຮົາທີ່ Yakima Neighborhood Health Services ກຳລັງຊ່ວຍໃຫ້ຄົນໃດໜຶ່ງໃນລັດໄດ້ລົງທະບຽນສຳລັບໂຄງການນີ້ ແລະ ໄດ້ຮັບການຄອບຄຸມ.

### ຜູ້ໃດມີຄຸນສົມບັດ?

ໂອກາດນີ້ແມ່ນມີໃຫ້ສຳລັບພະນັກງານທີ່:

- ເຮັດວຽກໃນສະຖານທີ່ດູແລເບິ່ງແຍງເດັກນ້ອຍທີ່ມີໃບອະນຸຍາດ. ສິ່ງນີ້ປະກອບໂຄງການດູແລເບິ່ງແຍງເດັກນ້ອຍຕາມເຮືອນແບບຄອບຄົວ, ອີງໃສ່ສູນ, ຕາມອາຍຸໂຮງຮຽນ ແລະ ໂດຍອີງໃສ່ລັກສະນະນອກສະຖານທີ່.
- ບັນລຸຕາມຂໍ້ກຳນົດລາຍຮັບປະຈຳຄົວເຮືອນ ແລະ ໂຄງການອື່ນໆ.
- ລົງທະບຽນໃນແຜນການສຸຂະພາບເງິນ Cascade Care ຜ່ານ *Washington Healthplanfinder.*



### ວິທີການລົງສະໝັກ

ໂທຫາ ຫຼື ສົ່ງອີເມວຫາ Yakima Neighborhood Health Services ເພື່ອຮັບເອົາຄວາມຊ່ວຍເຫຼືອຫຼ້າຈາກຜູ້ຊ່ວຍທີ່ຜ່ານການຝຶກຝົນ. ກະລຸນາລະບຸຊື່ແທ້ ແລະ ນາມສະກຸນຂອງທ່ານ, ໝາຍເລກໂທລະສັບ ແລະ ເວລາທີ່ດີສຸດໃນການໂທ. Yakima Neighborhood Health Services ຈະຕິດຕໍ່ຫາທ່ານ ແລະ ຊ່ວຍໃຫ້ທ່ານສຳເລັດການສະໝັກອອນລາຍຜ່ານ *Washington Healthplanfinder* ເພື່ອເບິ່ງວ່າທ່ານມີຄຸນສົມບັດ ຫຼື ບໍ່.

ໂທຫາ: 509-574-0826

ສົ່ງອີເມວຫາ: ccnavi@ynhs.org

ທ່ານອາດຄຸນສົມບັດສຳລັບໂຄງການອື່ນໆ, ເຊິ່ງລວມເຖິງການຄອບຄຸມໂດຍບໍ່ເສຍຄ່າ ຫຼື ມີຄ່າໃຊ້ຈ່າຍຕໍ່າຜ່ານ Washington Apple Health.

ຄວາມຊ່ວຍເຫຼືອດ້ານພາສາແມ່ນມີໃຫ້ຫຼາຍກວ່າ 200 ພາສາ.